ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ 061 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 15 JUL 2024

# ຂໍ້ຕົກລົງ

## ວ່າດ້ວຍການເກັບ ແລະ ນໍາໃຊ້ເງິນລາຍຮັບຈາກຄ່າບໍລິການຕ່າງໆ ຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ (ໄລຍະຂ້າມຜ່ານ)

- ອີງຕາມ ມະຕິວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ເລກທີ 04/ກມສພ, ລົງວັນທີ 11 ເມສາ 2024;
- ອີງຕາມ ມະຕິວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດມະຕິ ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່ ເລກທີ 05/ລບ, ລົງວັນທີ 21 ພຶດສະພາ 2024;
- ອີງຕາມ ດໍາລັດວ່າດ້ວຍການຫັນຫົວໜ່ວຍວິຊາການເປັນເຈົ້າຕົນເອງ ເລກທີ 282/ລບ, ລົງວັນທີ 22 ພຶດສະພາ 2024;
- ອີງຕາມ ດໍາລັດວ່າດ້ວຍພາລະກອນ ເລກທີ 283/ລບ, ລົງວັນທີ 22 ພຶດສະພາ 2024;
- ອີງຕາມ ກົດໝາຍວ່າດ້ວຍສາທາລະນະສຸກ ສະບັບເລກທີ 38/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ກົດໝາຍວ່າດ້ວຍການປິ່ນປົວ ສະບັບເລກທີ 48/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ຍຸດທະສາດວ່າດ້ວຍການອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ຂອງ ສປປ ລາວ ແຕ່ປີ 2016-2025 ສະບັບເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 2233/ສທ, ລົງວັນທີ 03 ສິງຫາ 2022;
- ອີງຕາມ ຄໍາແນະນໍາການຈັດຕັ້ງປະຕິບັດການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ໄລຍະຂ້າມຜ່ານ ຮອດປີ 2020 ໂດຍບໍ່ໄດ້ສອບເສັງລະດັບຊາດ ສະບັບເລກທີ 0182/ສວປ, ລົງວັນທີ 11 ຕຸລາ 2019;
- ອີງຕາມ ຄໍາແນະນໍາການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ສະບັບເລກທີ 0108/ສວປ, ລົງວັນທີ 27 ພະຈິກ 2020;
- ອີງຕາມ ການຄົ້ນຄ້ວາ ແລະ ການຕົກລົງເຫັນດີເປັນເອກະພາບໃນກອງປະຊຸມປະຈໍາອາທິດ ຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ ຄັ້ງວັນທີ 10 ກໍລະກົດ 2024.

### ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ຕົກລົງ:

ມາດຕາ 1 ເຫັນດີໃຫ້ ສະພາຄຸ້ມຄອງວິຊາຊີບປິ່ນປົວ ເກັບເງິນຄ່າບໍລິການຕ່າງໆ ດັ່ງນີ້:

ກ. ຄ່າສະໝັກສອບເສັງລະດັບຊາດ ສໍາລັບຄົນລາວ:

- 350,000 ກີບ/ຄັ້ງ ສໍາລັບ ທ່ານໝໍ, ທັນຕະແພດ ແລະ ເພສັຊກອນ, ລວມທັງການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບເບື້ອງຕົ້ນ;
- 250,000 ກີບ/ຄັ້ງ ສໍາລັບ ພະຍາບານ ແລະ ພະດຸງຄັນ.



ສຈ ດຣ ຈັນເພັງ ທໍາມະວົງ

ຂ. ຄ່າຂຶ້ນທະບຽນ, ອອກ ແລະ ຕໍ່ອາຍຸ ໃບປະກອບວິຊາຊີບສົມບູນ:

1) ຄົນລາວ ທີ່ມີຕົ້ນສັງກັດ ຢູ່ ສະຖານການສຶກສາ ສາທາລະນະສຸກ ແລະ ສະຖານທີ່ ບໍລິການສຸຂະພາບຂອງ ລັດ:

- 600,000 ກີບ/ຄັ້ງ ສໍາລັບ ທ່ານໝໍ, ທັນຕະແພດ ແລະ ເພສັຊກອນ ປະລິນຍາຕີຂຶ້ນໄປ;
- 200,000 ກີບ/ຄັ້ງ ສໍາລັບ ທ່ານໝໍ, ທັນຕະແພດ ແລະ ເພສັຊກອນ ລຸ່ມປະລິນຍາຕີລົງມາ;
- 400,000 ກີບ/ຄັ້ງ ສໍາລັບ ພະຍາບານ ແລະ ຜະດຸງຄັນ ຊັ້ນສູງຂຶ້ນໄປ;
- 200,000 ກີບ/ຄັ້ງ ສໍາລັບ ພະຍາບານ ແລະ ຜະດຸງຄັນ ລຸ່ມຊັ້ນສູງລົງມາ.

2) ຄົນລາວ ທີ່ມີຕົ້ນສັງກັດ ຢູ່ ສະຖານການສຶກສາ ສາທາລະນະສຸກ ແລະ ສະຖານທີ່ບໍລິການສຸຂະພາບຂອງ ເອກະຊົນ

- 3,000,000 ກີບ/ຄັ້ງ (ເດືອນ 50,000 ກີບ) ສໍາລັບ ທ່ານໝໍ, ທັນຕະແພດ ແລະ ເພສັຊກອນ;
- 2,000,000 ກີບ/ຄັ້ງ (ເດືອນ 33,500 ກີບ) ສໍາລັບ ພະຍາບານ ແລະ ຜະດຸງຄັນ.

ຄ. ຄົນຕ່າງປະເທດ:

1) ຜູ້ທີ່ເຮັດວຽກ ຢູ່ ສະຖານການສຶກສາ ສາທາລະນະສຸກ, ສະຖານທີ່ບໍລິການສຸຂະພາບ, ໂຮງງານ, ບໍລິສັດ, ຮ້ານຂາຍຢາ ແລະ ອື່ນໆ ຂອງລັດ ທີ່ມີລາຍຮັບ ຫຼື ຖືກຈ້າງມາ:

- 10 ໂດລາ ອາເມລິກາ/ຄົນ ຕໍ່ ເດືອນ ຈ່າຍເປັນເງິນກີບ ຕາມອັດຕາແລກປ່ຽນປະຈໍາວັນ ຂອງ ທະນາຄານແຫ່ງ ສປປ ລາວ ກໍ່ໄດ້.
- ໄລຍະເວລາປະຕິບັດ:
  - 1 ມື້ ຫາ 3 ເດືອນ: 30 ໂດລາ ອາເມລິກາ/ຄົນ/ຄັ້ງ;
  - 3 ເດືອນ1 ມື້ ຫາ 6 ເດືອນ: 60 ໂດລາ ອາເມລິກາ/ຄົນ/ຄັ້ງ;
  - 6 ເດືອນ 1 ມື້ ຫາ 1 ປີ: 120 ໂດລາ ອາເມລິກາ/ຄົນ/ຄັ້ງ.

2) ຜູ້ທີ່ເຮັດວຽກ ຢູ່ ສະຖານການສຶກສາ ສາທາລະນະສຸກ, ສະຖານທີ່ບໍລິການສຸຂະພາບ, ໂຮງງານ, ບໍລິສັດ, ຮ້ານຂາຍ ຢາ ແລະ ອື່ນໆ ຂອງ ເອກະຊົນ:

- 50 ໂດລາ ອາເມລິກາ/ຄົນ ຕໍ່ ເດືອນ ຈ່າຍເປັນເງິນກີບ ຕາມອັດຕາແລກປ່ຽນປະຈໍາວັນ ຂອງ ທະນາຄານແຫ່ງ ສປປ ລາວ ກໍ່ໄດ້ (1 ປີ 600 ໂດລາ ອາເມລິກາ/ຄົນ/ຄັ້ງ).
- ໄລຍະເວລາປະຕິບັດ:
  - 1 ມື້ ຫາ 3 ເດືອນ: 150 ໂດລາ ອາເມລິກາ/ຄົນ/ຄັ້ງ;
  - 3 ເດືອນ 1 ມື້ ຫາ 6 ເດືອນ: 300 ໂດລາ ອາເມລິກາ/ຄົນ/ຄັ້ງ;
  - 6 ເດືອນ 1 ມື້ ຫາ 1 ປີ: 600 ໂດລາ ອາເມລິກາ/ຄົນ/ຄັ້ງ.

3) ຄົນຕ່າງປະເທດທີ່ມາຊ່ວຍເຫຼືອທາງດ້ານວິຊາການ, ດ້ານມະນຸດສະທໍາ ຫຼື ເປັນອາສາສະໝັກຊ່ວຍເຫຼືອລ້າ ຢູ່ ສະຖານການສຶກສາ ແລະ ສະຖານທີ່ບໍລິການສຸຂະພາບຂອງລັດ, ສະພາຄຸ້ມຄອງວິຊາຊີບປິ່ນປົວຈະພິຈາລະນາຍົກເວັ້ນການເກັບ.

**ມາດຕາ 2** ເຫັນດີໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ ນໍາໃຊ້ເງິນລາຍຮັບເຫຼົ່ານີ້ເພື່ອໃຊ້ຈ່າຍເຂົ້າໃນການເຄື່ອນໄຫວວຽກງານ ຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວຕາມລະບຽບການ.

ສຈ ດຣ ຈັນເພັງ ທໍາມະວົງ

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງສະບັບເລກທີ 0045/ສວປ, ລົງວັນທີ 11 ມີນາ 2021, ຈະມີການປັບປຸງແຕ່ລະໄລຍະ ຕາມຄວາມເໝາະສົມ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ສຈ. ດຣ. ປອນເມກ ດາລາລອຍ

<u>ບ່ອນນຳສົ່ງ:</u>

1. ປະທານ, ຮອງປະທານ ສວປ ຜູ້ລະ 01 ສະບັບ
2. ຫ້ອງການກະຊວງສາທາລະນະສຸກ 01 ສະບັບ
3. ຫ້ອງການ ສວປ 01 ສະບັບ
4. ຄະນະກຳມະການວິຊາຊີບ ຄະນະລະ 01 ສະບັບ